multicultural health communication

Laotian
[BHC-5605]

# ສິ່ງທີ່ຜູ້ຍິງຄວນຮູ້ກ່ຽວກັບການຜ່າເອົາມົດລູກອອກ
# What women should know about hysterectomy

ຢູ່ໃນອອສເຕຣເລັຍ ໃນແຕ່ລະປີ ຜູ້ຍິງຈຳນວນເປັນພັນໆຄົນໄດ້ຮູ້ວ່າເຂົາເຈົ້າຕ້ອງໄດ້ຜ່າຕັດມົດລູກ (hysterectomy) - ຊຶ່ງແມ່ນການຜ່າຕັດເອົາມົດລູກອອກ. ແຕ່ວ່າ ເຖິງແມ່ນວ່າການຜ່າຕັດນີ້ແມ່ນວິທີການປິ່ນປົວທີ່ໃຊ້ເລື້ອຍໆ ກັບບັນຫາຫຼາຍໆຢ່າງ, ແຕ່ວ່າຍັງມີການເຂົ້າໃຈຜິດການຫຼາຍຢູ່.

## ເປັນຫຍັງຜູ້ຍິງຈຶ່ງຕ້ອງໄດ້ຜ່າຕັດ?

ໃນລະຫວ່າງໃກ້ຈະຮອດອາຍຸໝົດຣະດູ (ຊຶ່ງເປັນເວລາທີ່ຣະດູຈະຢຸດມາໃນທີ່ສຸດ), ຜູ້ຍິງບາງຄົນມີເລືອດອອກທາງຊ່ອງຄອດ ຢ່າງຫຼາຍແລະບໍ່ສມ່ຳສເມີ. ອັນນີ້ ອາດຈະເກີດຂຶ້ນຍ້ອນມີການປ່ຽນແປງທາງດ້ານໂຮໂມນ ຫຼື ອາດເປັນຍ້ອນມີເນື້ອງອກ (ເນື້ອງອກໃຍໃນມົດລູກຊຶ່ງບໍ່ແມ່ນມະເຮັງ). ເຖິງແມ່ນວ່າຕາມປົກກະຕິແລ້ວ ເນື້ອງອກຊນິດນີ້ ຈະບໍ່ເປັນພິດເປັນພັຍຫຍັງ, ແຕ່ວ່າບາງເທື່ອມັນອາດເຮັດໃຫ້ເປັນຣະດູຢ່າງແຮງ, ແລະມີບັນຫາຢ່າງອື່ນໆນຳອີກ. ການຜ່າຕັດມົດລູກຍ້ອນເຫດຜົນຢ່າງອື່ນແຕ່ບໍ່ຄ່ອຍມີເລື້ອຍ ນັ້ນກໍຄື ຜ່າຕັດຍ້ອນເປັນມະເຮັງໃນມົດລູກ, ໃນຮັງໄຂ່ ແລະ ໃນປາກມົດລູກ.

## ການຜ່າຕັດນີ້ຕ້ອງໄດ້ຜ່າເອົາຮັງໄຂ່ອອກພ້ອມບໍ?

ບໍ່ສເມີໄປ. ຮັງໄຂ່ຈະຖືກຜ່າອອກກໍຕໍ່ເມື່ອມັນເປັນພຍາດເທົ່ານັ້ນ, ຫຼືວ່າຖ້າຜູ້ຍິງໃກ້ຮອດຍາມໝົດຣະດູ. ການຜ່າເອົາຮັງໄຂ່ອອກເມື່ອໝົດຣະດູຈະປ້ອງກັນບໍ່ໃຫ້ເປັນມະເຮັງໃນຮັງໄຂ່ໃນອະນາຄົດ. ສຳລັບຜູ້ຍິງທີ່ຍັງບໍ່ທັນຮອດຍາມໝົດຣະດູເທື່ອນັ້ນ, ການຜ່າເອົາຮັງໄຂ່ອອກຈະເຮັດໃຫ້ໝົດຣະດູທັນທີ ແລະ ໝົດກ່ອນກຳນົດ. ແມ່ຍິງທີ່ຍັງໜຸ່ມທີ່ເສັຍຮັງໄຂ່ກ່ອນວັຍໝົດຣະດູຄວນຖາມທ່ານໝໍເບິ່ງກ່ຽວກັບການປິ່ນປົວແບບໃຊ້ຢາທົດແທນໂຮໂມນ.

## ການຜ່າເອົາມົດລູກອອກເປັນວິທີປິ່ນປົວວິທີດຽວເທົ່ານັ້ນບໍ?

ເຖິງແມ່ນວ່າການຜ່າເອົາມົດລູກອອກ ເປັນສິ່ງຈຳເປັນສຳລັບມະເຮັງບາງຊນິດ, ແຕ່ວ່າ ຕາມປົກກະຕິແລ້ວ ມັນແມ່ນວິທີສຸດທ້າຍສຳລັບບັນຫາເຊັ່ນເປັນຣະດູແຮງຫຼືເປັນເນື້ອງອກ. ວິທີປິ່ນປົວຢ່າງອື່ນທີ່ຄວນປຶກສາກັບທ່ານໝໍຂອງທ່ານກໍມີ ເຊັ່ນວ່າ ຜ່າເອົາເນື້ອງອກອອກ, ຫຼື ລົດຜ່ອນ ຫຼືປ້ອງກັນບໍ່ໃຫ້ເລືອດ ອອກຫຼາຍ ໂດຍປິ່ນປົວໂຮໂມນ ຫຼື ປິ່ນປົວໂດຍການຂູດມົດລູກ.

## ການຜ່າເອົາມົດລູກອອກ ແມ່ນເຮັດແນວໃດ?

ມີວິທີການຫຼາຍຢ່າງ ຊຶ່ງແຕ່ລະຢ່າງກໍມີຜົນດີແລະຜົນເສັຍໃນໂຕມັນເອງ. ທ່ານສາມາດປຶກສາເຣື່ອງນີ້ກັບທ່ານໝໍຂອງທ່ານເບິ່ງໄດ້.



NSW GOVERNMENT | Health

- ຜ່າຕັດທາງໜ້າທ້ອງ - ຜ່າເອົາມົດລູກອອກໂດຍຜ່າທາງຂວາງ ຢູ່ບ່ອນຕິດກັບທາງເທິງ ຂອງບໍລິເວນຂົນອະວັຍວະເພດ. ການຜ່າຕັດແບບນີ້ຕາມປົກກະຕິແມ່ນຜ່າທາງໜ້າທ້ອງ, ແລະອາດໄດ້ ຜ່າເອົາອອກທັງມົດລູກແລະປາກມົດລູກ. ການຜ່າຕັດອີກຢ່າງນຶ່ງທີ່ບໍ່ຄ່ອຍມີຫຼາຍ, ຊຶ່ງເອີ້ນວ່າ ຜ່າແບບບາງສ່ວນຫຼື "subtotal" ຊຶ່ງຈະປ່ອຍປາກມົດລູກໄວ້ຕາມເດີມ (ບໍລິເວນສິ້ນແຄບສຸດຊຶ່ງຢູ່ ໃກ້ກັບຊ່ອງຄອດ).
- ຜ່າຕັດທາງຊ່ອງຄອດ - ຜ່າເອົາມົດລູກອອກທາງຊ່ອງຄອດ. ວິທີນີ້ຈະບໍ່ມີແປ້ວ.

ຜົນສະທ້ອນຂອງການຜ່າຕັດເອົາມົດລູກອອກມີຫຍັງແດ່?

ການຜ່າຕັດເອົາມົດລູກອອກໝາຍເຖິງວ່າຣະດູຈະໝົດ ແລະ ບໍ່ສາມາດມີລູກໄດ້ອີກຕໍ່ໄປ. ບໍ່ເປັນຄວາມຈິງທີ່ວ່າການຜ່າເອົາມົດລູກອອກຈະເຮັດໃຫ້ນ້ຳໜັກຂຶ້ນຫຼືມີການປ່ຽນແປງທາງອາຣົມ. ຢ່າງໃດກໍດີ ສຳລັບຜູ້ຍິງບາງຄົນ, ໂດຍສະເພາະ ຜູ້ຍິງທີ່ຍັງໜຸ່ມ, ອາດຮູ້ສຶກເສັຍໃຈທີ່ບໍ່ສາມາດຈະມີລູກໄດ້ອີກຕໍ່ໄປ. ເປັນສິ່ງປົກກະຕິອີກເຊັ່ນກັນທີ່ບາງຄົນຈະຮູ້ສຶກ "ຊຶມເສົ້າ" ຫຼັງຈາກການຜ່າຕັດໃຫຍ່ແບບໃດແບບນຶ່ງ. ຜູ້ຍິງຫຼາຍຄົນພົບວ່າ ຈະຊ່ວຍໄດ້ເມື່ອໄດ້ໂອ້ລົມກັບທ່ານໝໍທີ່ປິ່ນປົວເຂົາເຈົ້າ, ຫຼືເວົ້າລົມກັບທ່ານໝໍປະຈຳຂອງຕົນ. ນອກຈາກນີ້ ທ່ານຍັງສາມາດໄປຫາສູນສຸຂພາບແມ່ຍິງ, ຄລີນິກວາງແຜນຄອບຄົວ FPA (Family Planning Association) ຫຼື ສູນສຸຂພາບຊຸມຊົນ.

ຈະໃຊ້ເວລາດົນປານໃດໃນການພັກຟື້ນ?

ການຜ່າທາງໜ້າທ້ອງໃຊ້ເວລານອນໂຮງໝໍປະມານຫ້າມື້ ແລະ ໃຊ້ເວລາເຖິງຫົກຫຼືແປດອາທິດກ່ອນຈະເຊົາດີ. ການຜ່າທາງຊ່ອງຄອດແມ່ນນອນໂຮງໝໍປະມານສອງມື້ແລະ ໃຊ້ເວລາເຖິງສີ່ອາທິດໃນການ ພັກຟື້ນ.

ຕ້ອງໃຊ້ເວລາດົນປານໃດຈຶ່ງຈະຮ່ວມເພດໄດ້ຄືນອີກ?

ປະມານຫົກຫາແປດອາທິດ. ການຜ່າຕັດເອົາມົດລູກອອກຈະບໍ່ມີຜົນສະທ້ອນຕໍ່ຄວາມຮູ້ສຶກທາງເພດຫຼືຄວາມຮູ້ສຶກໃນການເຖິງຈຸດສຸດຍອດຂອງຜູ້ຍິງ. ຜູ້ຍິງທີ່ເຄີຍມີບັນຫາເຣື່ອງຣະດູມາແຮງ ຫຼື ບໍ່ສະບາຍໃນຣະຫວ່າງຮ່ວມເພດມາກ່ອນຜ່າຕັດອາດຈະພົບວ່າມີຄວາມສຸກຫຼາຍຂຶ້ນຈາກ ການ ຮ່ວມເພດ.

ຕ້ອງໄດ້ກວດຫາມະເຮັງມົດລູກຢູ່ບໍຫຼັງຈາກຜ່າເອົາມົດລູກອອກແລ້ວ?

ສຳລັບຜູ້ຍິງທີ່ປາກມົດລູກບໍ່ໄດ້ຖືກຜ່າອອກນຳ ຄວນໄປກວດຫາມະເຮັງປາກມົດລູກທຸກໆສອງປີ, ຫຼືຕາມເວລາທີ່ໝໍສັ່ງ. ນອກຈາກນີ້ ຖ້າມີເລືອດອອກກໍ່ຕ້ອງໄດ້ໄປຫາໝໍເຊັ່ນດຽວກັນ.

ຖ້າທ່ານ ຕ້ອງການ ຄວາມຊ່ວຍເຫຼືອເຣື່ອງການ ໂທຣະສັບເປັນພາສາອັງກິດ, ກະຣຸນາໂທຣະສັບຫາ ຜແນກແປ ເອກກະສານ ແລະ ແປ ພາສາ (TIS) ເບີໂທຣ 131 450.

ທ່ານສາມາດຫາເບິ່ງຂໍ້ມູນເຣື່ອງສຸຂພາບເປັນພາສາລາວຕື່ມໄດ້ທາງອິນເຕີແນັດ ທີ່ ເວັບ ໄຊຕ໌ ຂອງ Multicultural Communication ທີ່ http://www.mhcs.health.nsw.gov.au

NSW Multicultural Health Communication Service
Website: http://www.mhcs.health.nsw.gov.au
e-mail: mhcs@sesiahs.health.nsw.gov.au
phone: (02) 9816 0347



ເບີໂທຣະສັບເຫຼົ່ານີ້ ແມ່ນຖືກຕ້ອງໃນເວລາທີ່ພິມເອກກະສານນີ້ ແຕ່ວ່າອາດມີການປ່ຽນແປງ. ທ່ານອາດຈະຕ້ອງໄດ້ກວດເບິ່ງເລກໂທຣ ໃນສມຸດໂທຣະສັບເບິ່ງໃໝ່.